**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ** 27 **ທັນວາ 2009 (12-27-2009)**

---

**ຈົ່ງຟັງສຽງຂອງເທວະດາ:**

**ຂໍ້ພຣະຄັມພີໃນບົດຮຽນ**: (ຟີລິບປອຍ 2:5-11)

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:** ບົດຮຽນນີ້ເວົ້າເຖິງພຣະຜູ້ຊ່ອຍໃຫ້ພົ້ນ ສະເດັດເຂົ້າມາໃນໂລກ. ອາຈານໂປໂລ ໄດ້ສອນບົດຮຽນການຖ່ອມຕົວ ໂດຍຍົກເອົາຕົວຢ່າງຂອງພຣະເຢຊູມາປະກອບໃຊ້.

**ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:** ບົດຮຽນນີ້ຈະຊ່ອຍທ່ານໃຫ້ເຂົ້າໃຈເຖິງການເກີດເປັນເນື້ອໜັງ ແລະການຍົກ ອົງພຣະຄຣິດນັ້ນເປັນພື້ນຖານຊີວິດຂອງຄຣິສຕຽນ ເພື່ອຊ່ອຍທ່ານໃຫ້ຕິດຕາມ ເອົາແບບຢ່າງຂອງອົງພຣະເຢຊູຄື: ຮັບໃຊ້ດ້ວຍການຖ່ອມໃຈ.

**ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:**

ບົດຮຽນນີ້ໄດ້ອະທິບາຍເຖິງການບັງເກີດເປັນເນື້ອໜັງຂອງອົງພຣະເຢຊູ ແລະສາມາດເອົາມາເປັນຕົວຢ່າງໃນການ ຖ່ອມຕົວ ເພື່ອພວກເຮົາຈະເອົາມາປະກອບໃຊ້.

**ການຈັດຕຽມ ແລະແຜນການສອນຂອງຄຣູ:**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**ແນະນຳ**: ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ຟີລິບປອຍ 2:1-4, ຊຶ່ງເປັນທັສນະນິສັຍຂອງຄຣິສຕຽນໃນເມືອງຟີ ລິບປອຍ. ທັສນະນິສັຍແນວໃດທີ່ອົງພຣະຄຣິດໄດ້ຊົງສຳແດງອອກໃຫ້ເຫັນໃນຕົວຂອງພຣະອົງ?

ແນະນຳໃຫ້ນັກຮຽນອ່ານຄຳວ່າ“ ບົດຮຽນນີ້ໄດ້ສະທ້ອນຕໍ່ຊີວິດຂອງທ່ານແນວໃດ”

ຂໍໃຫ້ນັກຮຽນອ່ານຄຳແນະນຳຈາກບົດຮຽນ, ແລ້ວໃຫ້ບອກເຖິງການສເລີມສລອງພຣະເຢຊູຜູ້ເປັນພຣະບຸດຂອງພຣະ ເຈົ້າມາ 4 ທາງຕາມບົດຮຽນນີ້.

1. **<u>ຣັສມີຈິ່ງມີຕໍ່ກະສັດຜູ້ເກີດໃໝ່:</u>** (ຟີລິບປອຍ 2:5-6)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຟີລິບປອຍ 2:5-6
- ອະທິບາຍ: ຄຣິສຕຽນໃນຍຸກແຮກໃນຟີລິບປອຍ 2:5-11 ທີ່ເຂົາເຈົ້າຮ້ອງເພງສັຣເສີນໃນການສເລີມສລອງພຣະເຈົ້າຂອງພວກເຮົາວ່າພຣະຄຣິດເທົ່າທຽມກັບພຣະເຈົ້າ.
- ອະທິບາຍໃຫ້ນັກຮຽນ ທີ່ອາຈານໂປໂລເວົ້າວ່າ "ການດຳຣົງຊີວິດຢູ່ໃນແບບຢ່າງຂອງພຣະເຈົ້າ." ມີຄວາມໝາຍແນວໃດ. ເວົ້າ: ພຣະເຈົ້າພຣະບິດາ, ພຣະບຸດ, ແລະພຣະວິນຍານບໍຣິສຸດທັງໝົດນີ້ເປັນພຣະເຈົ້າ.
- ພວກເຮົາຈະເຫັນຄວາມສເມີພາບອັນເດັ່ນຊັດ ແລະກິຈການງານໜ້າທີ່ໃນຕົວຂອງພຣະຄຣິດໄດ້ຢ່າງໃດ?
- ທ່ານຈະໃຫ້ກຽດອັນສູງສົ່ງແດ່ກະສັດຜູ້ບັງເກີດໃໝ່ແນວໃດ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ຟີລິບປອຍ 2:5-6)

1. ແມ່ນຫຍັງທີ່ເປັນທັສນະຄະຕິຂອງທ່ານທີ່ໃຫ້ມີປໂຍດແກ່ຄົນອື່ນໃນຕົວຂອງພຣະຄຣິດ?
2. ຄວາມຈິງແທ້ທີ່ພຣະຄຣິດຜູ້ເປັນເຈົ້າເຮັດໃຫ້ຊີວິດຂອງທ່ານມີຄວາມແຕກຕ່າງແນວໃດແດ່?
3. ແມ່ນຫຍັງທີ່ເປັນໜ້າທີ່ຂອງທ່ານທີ່ເຮັດຕໍ່ສັງຄົມ ແລະໃນຄຣິສຕະຈັກ?
4. ທ່ານໄດ້ມອງເຫັນໜ້າທີ່ຂອງທ່ານແນວໃດແດ່?
5. ທ່ານຈະໃຫ້ກຽດແດ່ກະສັດຜູ້ບັງເກີດໃໝ່ຫລາຍຂຶ້ນໃນປີທີ່ຈະມາເຖິງນີ້ຢ່າງໃດແດ່?

2. **<u>ຖືກບັງໄວ້ຝ່າຍເນື້ອໜັງ:</u>** (ຟີລິບປອຍ 2:7-8)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຟີລິບປອຍ 2:7-8
- ພຣະເຢຊູຍອມສະລະບັນລັງໃນຣາຊອານາຈັກຂອງພຣະອົງຖ່ອມຕົວລົງມາຮັບສະພາບມະນຸດ.
- ໃຫ້ນັກຮຽນບອກສິ່ງອື່ນໆຊຶ່ງພຣະເຢຊູຍອມສລະ (ຕຳແໜ່ງ, ສິດທິພິເສດ). ໃຫ້ນັກຮຽນອະທິບາຍວ່າພຣະຄຣິດເປັນແບບຢ່າງຂອງການເປັນມະນຸດໃຫ້ບັນດາຜູ້ທີ່ເຊື່ອນຳມາໃຊ້ໃນຊີວິດໃນຖ້າມກາງຂອງພວກເຮົາ "ໃນເຮົາ" ໃນສມັຍນີ້.
- ພຣະເຢຊູບໍ່ໄດ້ຕ່ຳກວ່າພຣະເຈົ້າ; ພຣະອົງຊົງເປັນພຣະເຈົ້າ ຮ້ອຍເປີເຊັນ ແລະເປັນມະນຸດຮ້ອຍເປີເຊັນໃນເວລາທີ່ພຣະອົງຊົງເດີນຢູ່ໃນໂລກນີ້. ຄົ້ນຄວ້າ: ເປັນຫຍັງພຣະເຢຊູຈຶ່ງສະເດັດລົງມາໃນ "ສະພາບມະນຸດ." ໃຫ້ນັກຮຽນປະກາດຄຸນຄ່າຂອງພຣະຄຣິດໃນສະພາບມະນຸດ. ໃຫ້ຍົກເອົາຣາຄາທີ່ມີຢູ່ໃນເຈັ້ຽ (ໃບເສັດຮັບເງິນ ຂຶ້ນມາ. ແລ້ວ ຍົກໄມ້ກາງແຂນຂຶ້ນມາເປັນຕົວຢ່າງ. ພຣະເຢຊູຍອມຮັບແບກໄມ້ກາງແຂນແລະທຳຕາມທີ່ພຣະບິດາຊົງແນະນຳ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ຟີລິບປອຍ 2:7-8

1. ແມ່ນຫຍັງແດ່ທີ່ທ່ານຕ້ອງໄດ້ຍອມເສັຽສຣະທາງຝ່າຍໂລກເພື່ອເຫັນແກ່ຣາຊອານາຈັກອັນກວ້າງໃຫຍ່ໄພສານຂອງພຣະເຈົ້າ?
2. ທ່ານຈະປະຕິເສດຕົນເອງເພື່ອໃຫ້ຄົນທາງນອກເຫັນແລ້ວມີຄວາມສົນໃຈ?
3. ທ່ານຈະເຮັດແນວໃດໃນການຮັບໃຊ້ຂອງທ່ານເພື່ອນຳຄົນເຂົ້າມາຫາພຣະເຈົ້າໄດ້?
4. ທ່ານໄດ້ຈ່າຍຄ່າການຕິດຕາມພຣະເຢຊູຢູ່ບໍ່? ເທົ່າໃດ?

3 . **<u>ພຣະຄຣິດຜູ້ເປັນທີ່ຍົກຍ້ອງໃນຟ້າສວັນ:</u>** (ຟີລິບປອຍ 2:9)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຟີລິບປອຍ 2:9
- ເປັນຫຍັງພຣະເຈົ້າຈຶ່ງຍົກສູງພຣະເຢຊູ ແລະຍົກນາມຊື່ຂອງພຣະອົງຢູ່ເໜືອນາມທັງໝົດ.
- ພຣະເຈົ້າມີເງື່ອນໄຂອັນໃດແດ່ກ່ອນທີ່ຈະຍົກຜູ້ໃດຜູ້ນຶ່ງຂຶ້ນ?
- ໃຫ້ນັກຮຽນເຕີມຊ່ອງຫວ້າງໃຫ້ໄດ້ຄວາມຄົບບໍຣິບູນຂ້າງລຸ່ມນີ້:
  ພຣະເຈົ້າໄດ້ຊົງກ້າວເຂົ້າມາໃນຄວາມເປັນມະນຸດຂອງພວກເຮົາ ເພື່ອສັມຜັດກັບພວກເຮົາດ້ວຍພລັງອໍານາດຂອງພຣະອົງ. ນີ້ເປັນສງ່າຣາສີອັນສູງສົ່ງຂອງພຣະອົງ ແລະໃຫ້ພຣະນາມຂອງພຣະອົງເໜືອນາມທັງໝົດ, ແລະເປັນຕົ້ນເຮັດໃຫ້ບັນດາຜູ້ທີ່ເຊື່ອທຸກໆຄົນ…………………”(ນະມັສການ)
  ຄວາມໝາຍອັນແທ້ຈິງນັ້ນຄືແນວໃດ?

**<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ຟີລິບປອຍ 2:9

1. ອີງຕາມ 1 ເປໂຕ 5:7, ເທິງຕາຊັ່ງຈາກ 1 ເຖິງ 10 ພຣະເຈົ້າໄດ້ຊົງຍົກທ່ານຂຶ້ນຫລາຍປານໃດ?
2. ແມ່ນຫຍັງທີ່ທ່ານໄດ້ເຮັດ ແລະຫລາຍປານໃດທີ່ທ່ານໄດ້ສັດທາໃນພຣະເຢຊູ?
3. ໃນຊີວິດປະຈໍາວັນຂອງທ່ານນັ້ນຫລາຍປານໃດທີ່ທ່ານໄດ້ຍົກສູງ ແລະສັຣເສີນພຣະເຢຊູພຣະຜູ້ເປັນເຈົ້າ?

4. **<u>ຍົກຍໍໃນສວັນຜູ້ເປັນເຈົ້າຊີວິດແຫ່ງສັນຕິສຸກ:</u>** (ຟີລິບປອຍ 2:10-11

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ຟີລິບປອຍ 2:10-11
- ໃນເມື່ອພວກເຮົາຫາກມີຄວາມເຂົ້າໃຈພຣະອົງຢ່າງຖືກຕ້ອງແລ້ວພວກເຮົາຈະຄຸເຂົ່າກົ້ມຂາບຕໍ່ພຣະພັກພຣະອົງ.
- ທ່ານໄດ້ຢູ່ໃກ້ຊິດພຣະເຢຊູຫລາຍປານໃດ ໃນການຕິດຕາມການຮັບໃຊ້ຄົນອື່ນ?

**<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ຟີລິບປອຍ 2:10-11)

1. ທ່ານຈະເຮັດແນວໃດເພື່ອໃຫ້ທ່ານໄດ້ເປັນຕົວແທນພຣະເຢຊູຄຣິດໃນການເປັນແບບຢ່າງໃຫ້ແກ່ຄົນອື່ນ?
2. ຈະເຮັດແນວໃດເພື່ອໃຫ້ທ່ານເອງຮູ້ຈັກຕໍາແໜ່ງຂອງພຣະຄຣິດໃນການເປັນອົງພຣະຜູ້ເປັນເຈົ້າ?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ຄຣິສຕຽນທັງຫລາຍເຂົາເຈົ້າມີພຣະຄຣິດຢູ່ໃນຈິດໃຈສເມີ.
- ພຣະຄຣິດເປັນແບບຢ່າງໃນສະພາບມະນຸດສໍາລັບພວກເຮົາໂດຍການສຣະລົງມາຈາກບັນລັງອັນສູງກຽດມາຊົງສະພາບເປັນມະນຸດ, ສະເດັດມາເປັນຜູ້ຮັບໃຊ້, ແລະປະລົງມາວາຍພຣະຊົນເທິງໄມ້ກາງແຂນເພື່ອໃຫ້ມະນຸດໄດ້ຮັບຄວາມລອດພົ້ນ.
- ເພາະວ່າພຣະຄຣິດໄດ້ຊົງຖວາຍຕົນເອງເພື່ອໃຫ້ພວກເຮົາໄດ້ຮັບເອົາພຣະເຈົ້າຜູ້ສູງສຸດ,ເພື່ອໃຫ້ທຸກຄົນທີ່ພຣະອົງຊົງສ້າງໄດ້ນະມັສການພຣະອົງ.